ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ສະຖາບັນພັດທະນາສີມືແຮງງານ
ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດສຳລັບການເຕີບໂຕຂອງ ສປປ ລາວ.
ສັນຍາເລກທີ : C2.2-G1.2.1

ເລກທີ: ..1562/ສພງ
ນະຄອນຫຼວງວຽງຈັນ, ວັນທີ:....22 ກັນຍາ 2026

ໜັງສືແຈ້ງເຊີນປະມູນ

1. ພາຍໃຕ້ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ(PSG), ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຖາບັນພັດທະນາສີມືແຮງງານ, ໄດ້ຮັບອະນຸມັດ ເພື່ອດຳເນີນການປະມູນຈັດຊື້ **ເຄື່ອງມື ແລະ ອຸປະກອນໃຊ້, ໃນວຽກງານສາງ ໃນຂົງເຂດຂົນສົ່ງສຳລັບສະໜອງໃຫ້ແກ່ 01. ສະຖາບັນພັດທະນາສີມືແຮງງານ, 02. ສູນພັດທະນາສີມືແຮງງານ ແຂວງ ຈຳປາສັກ, ແລະ 03. ສູນພັດທະນາສີມືແຮງງານ ແຂວງ ອຸດົມໄຊ** ດ້ວຍການປະມູນແບບເປີດກວ້າງພາຍໃນ ສປປ ລາວ.
2. ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ: 60 ວັນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນພາຍໃນຕາມທີ່ໄດ້ລະບຸໄວ້ໃນຄູ່ມືແນະນຳ ຂອງທະນາຄານໂລກ ວ່າດ້ວຍຫລັກການການຈັດຊື້ຈັດຈ້າງສຳລັບປະເທດຜູ້ກູ້ຢືມ Procurement Regulations for IPF Borrowers 5th Edition September 2023 (https://thedocs.worldbank.org/en/doc/6c0602876d68949e80820507d90a14ed-0290012023/original/Procurement-Regulations-September-2023.pdf) ແລະ ເປີດໃຫ້ຜູ້ປະມູນທຸກໆຄົນທີ່ມີຄວາມເໝາະສົມຕາມບົດແນະນຳວ່າດ້ວຍການຈັດຊື້-ຈັດຈ້າງ ໂດຍສະເພາະ ຂໍ້. 3.15, 3.18 ແລະ 3.19 ທີ່ກຳນົດໄວ້ໃນນະໂຍບາຍຂອງທະນາຄານໂລກວ່າດ້ວຍການມີຜົນປະໂຫຍດຊ້ຳຊ້ອນ .
4. ສະຖາບັນພັດທະນາສີມືແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ຕາມເງື່ອນໄຂຂອງລະບຽບໂຄງການ(PSG) ເຂົ້າຍື່ນຊອງປະມູນການຈັດຊື້ ເຄື່ອງຈັກ, ເຄື່ອງມື ແລະ ອຸປະກອນວຽກງານສາງ ໃນຂົງເຂດຂົນສົ່ງສຳລັບ 01. ສະຖາບັນ, 02. ສູນພັດທະນາສີມືແຮງງານ ແຂວງ ຈຳປາສັກ, ແລະ 03. ສູນພັດທະນາສີມືແຮງງານ ແຂວງອຸດົມໄຊ.
5. ບໍລິສັດທີ່ມີຄວາມເໝາະສົມ ສາມາດຂໍຮັບເອກະສານປະມູນ ແລະ ຂໍ້ມູນສຳລັບການປະມູນໄດ້ນຳ ສະຖາບັນພັດທະນາສີມືແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ບ້ານຄຳຮຸ່ງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ອີເມວ: psgproject.proc@gmail.com; seangrloun67@gmail.com; ໃນເວລາໂມງການ, ໂດຍບໍ່ເສຍຄ່າ.
6. ຊອງປະມູນຈະຕ້ອງສົ່ງຫາ ສະຖາບັນພັດທະນາສີມືແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຫ້ອງປະຊຸມໃຫຍ່ຊັ້ນ 2 ຂອງສະຖາບັນພັດທະນາສີມືແຮງງານ) ບ້ານຄຳຮຸ່ງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ໂທລະສັບ, **030 5533846** ໃນວັນທີ ຫລື ກ່ອນ ວັນທີ **30** ຕຸລາ **2026**, ເວລາ **09:00** ໂມງ, ຊຶ່ງເປັນເວລາປິດຮັບ ແລະ ເປີດຊອງປະມູນ. ບໍ່ອະນຸຍາດໃຫ້ສົ່ງດ້ວຍລະບົບເອເລັກ. ຊອງປະມູນທີ່ສົ່ງຊ້າ ຈະຖືກປະຕິເສດ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ໆກຳນົດໄວ້ເບື້ອງຕົ້ນ.
7. ບໍລິສັດທີ່ຍື່ນຊອງປະມູນ **ຈະຕ້ອງປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ** (ຖ້າບໍ່ປະກອບມາຈະຖືວ່າສະຫຼະສິດ).

ຫົວໜ້າສະຖາບັນ

ສຸລິສັກ ສຸພັນທອງ

ວາລະການເປີດຊອງປະມູນ ຈັດຊື້ ເຄື່ອງມື ແລະ ອຸປະກອນໃຊ້ ໃນວຽກງານສາງ ໃນຂົງເຂດຂົນສົ່ງ ສຳລັບສະໜອງໃຫ້ແກ່ 01. ສະຖາບັນພັດທະນາສີມືແຮງງານ, 02. ສຸນ ພັດທະນາສີມືແຮງງານ ແຂວງ ຈຳປາສັກ, ແລະ 03. ສຸນພັດທະນາສີມືແຮງງານ ແຂວງອຸດົມໄຊ ດ້ວຍການປະມູນແບບເປີດກວ້າງພາຍໃນ ສປປ ລາວ.

ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ
ພາຍໃຕ້ແຜນງານໂຄງການກູ້ຢືມເງິນຈາກທະນາຄານໂລກ
ວັນທີ .....30/10/2026....., ທີ່ ຫ້ອງປະຊຸມໃຫຍ່ ຂອງສະຖາບັນພັດທະນາສີມືແຮງງານ

ເວລາ	ເນື້ອໃນ	ໝາຍເຫດ
10:00	ລົງທະບຽນ	ຄະນະຮັບຜິດຊອບ
10:05	ປິດຮັບການຍື່ນຊ່ອງປະມູນ	ຄະນະຮັບຜິດຊອບ
10:05-10:08	ກ່າວມີຄຳເຫັນ	ທ່ານ ບຸນຍອດ ຈັນທະວອນ ຫົວໜ້າ ຫ້ອງການ ກະຊວງ ຮສສ (ຫົວໜ້າໂຄງການ)
10:08-10:10	ກ່າວມີຄຳເຫັນ	ທ່ານ ສຸລິສັກ ສຸພັນທອງ ຫົວໜ້າສະຖາບັນພັດທະນາສີມືແຮງງານ
10:10-10:25	ດຳເນີນເປີດຊອງການປະມູນຈັດຊື້ ເຄື່ອງມື ແລະ ອຸປະກອນໃຊ້ ໃນວຽກງານສາງ ໃນຂົງເຂດຂົນສົ່ງສຳລັບສະໜອງໃຫ້ແກ່ 01. ສະຖາບັນພັດທະນາສີມືແຮງງານ, 02. ສຸນພັດທະ ນາສີມືແຮງງານ ແຂວງ ຈຳປາສັກ , ແລະ 03. ສຸນພັດທະນາສີມືແຮງງານ ແຂວງອຸດົມໄຊ	ບໍລິສັດທີ່ປຶກສາ ແລະ ຄະນະຮັບຜິດຊອບ
10:25-10:30	ປະກອບຄຳເຫັນ	ຄະນະກຳມະການຮັບຜິດຊອບ
10:30	ປິດກອງປະຊຸມ	ທ່ານ ບຸນຍອດ ຈັນທະວອນ ຫົວໜ້າ ຫ້ອງການ ກະຊວງ ຮສສ (ຫົວໜ້າໂຄງການ)

ຄະນະຮັບຜິດຊອບກອງປະຊຸມ